**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງສຶກສາທິການ ແລະ ກິລາ
ພາກວິຊາຄູ ພາສາອັງກິດ-ໄອຊີທີ ເລກທີ 016/ອກ.ອທ
ນະຄອນຫຼວງວຽງຈັນ, ວັນທີ 23
ພຶດສະພາ 2024

# ບົດສະຫຼຸບປະຈຳເດືອນ 5/2024
# ແລະ ແຜນວຽກຈຸດສຸມເດືອນ 6/2024

**ຮຽນ:** ທ່ານ ຜູ້ອຳນວຍການວິທະຍາໄລຄູ ດົງຄຳຊ້າງ

**ເລື່ອງ:** ບົດສະຫຼຸບປະຈຳເດືອນ 5/2024 ແລະ ແຜນວຽກຈຸດສຸມປະຈຳເດືອນ 6/2024 ຂອງພາກວິຊາຄູ ພາສາອັງກິດ-ໄອຊີທີ

ພາກວິຊາຄູ ພາສາອັງກິດ-ໄອຊີທີ ໄດ້ສັງລວມແຜນການເຄື່ອນໄຫວປະຈຳເດືອນ 5/2024 ແລະ ແຜນຈຸດສຸມປະຈຳເດືອນ 6/2024 ດັ່ງນີ້:

## I. ການເຄື່ອນໄຫວວຽກງານທີ່ພົ້ນເດັ່ນປະຈຳເດືອນ 5/2024

### ກ. ວຽກງານແນວຄິດການເມືອງ, ການຈັດຕັ້ງ ແລະ ນະໂຍບາຍ

1. ພະນັກງານສ່ວນຫຼາຍມີແນວຄິດຫຼັກໝັ້ນດີ ແລະ ມີຄວາມອຸ່ນອ່ຽງທຸ່ນທ່ຽງ ເຊື່ອໝັ້ນຕໍ່ການນຳພາຂອງພັກ.
2. ມີຄວາມຮັບຜິດຊອບຕໍ່ໜ້າທີ່ມອບໝາຍໃຫ້ເປັນຢ່າງດີ.
3. ປະຕິບັດ ແລະ ນັບຖືລະບຽບຂອງພັກ-ລັດໄດ້ເປັນຢ່າງດີເຊິ່ງມັນໄດ້ສະແດງອອກໃນການປະຕິບັດໂມງເວລາ ແຕ່ງກາຍ, ການໄປ-ການມາ ແລະ ການປະຕິບັດວຽກງານແຕ່ລະໜ້າວຽກ.

### ຂ. ວຽກງານວິຊາສະເພາະ

1. ຄູທຸກຄົນໄດ້ເອົາໃຈໃສ່ຂຶ້ນຫ້ອງສອນເປັນປົກກະຕິ.
2. ນຳພານັກສຶກສາຄູອອກແຮງງານໃນຕອນແລງວັນພຸດ
3. ນຳພານັກສຶກສາຄູພາຍໃນສາຍອອກແຮງງານໃນເຂດຮັບຜິດຊອບ
4. ຮຽບຮຽງເອກະສານປະກອບການສອນພັກສົ້ນປີຮຽນ
5. ຮຽບຮຽງເອກະສານປະກອບການບັນລະຍາຍພັກສົ້ນປີຮຽນ
6. ຈັດຕາຕາລາງຄູສອນຊ່ວງພັກສົ້ນປີຮຽນ
7. ຕັດຮູບນັກສຶກສາປີສຸດທ້າຍ
8. ອ່ານບົດວິໄຈ ແລະ ປ້ອງກັນບົດວິໄຈນັກສຶກສາປີສຸດທ້າຍ
9. ເຂົ້າຮ່ວມກອງປະຊຸມຝຶກອົບຮົມຍົກສູງຂີດຄວາມສາມາດ ຂອງຄູຊົນນະບົດໃນ ຊປປ ລາວ ຫຼັກສູດຝຶກອົບຮົມການພັດທະວິຊາຊີບຄູໃຫ້ກາຍເປັນຄູມືອາຊີບ ທີ່ນະຄອນຄຸນມິງ ແຂວງຢູນານ ສປ ຈີນ ຄັ້ງທີ 22 ມີນາ ຫາ 11 ພຶດສະພາ 2024
10. ລົງເກັບກຳຂໍ້ມູນການອ່ານ ແລະ ການລົບ ຂອງຊັ້ນປະຖົມ ປ 3 ທີ່ແຂວງ ໄຊຍະບູລີ ແລະ ແຂວງ ສາລະວັນ ວັນທີ 27 /4-5/5 2024

11. ຝຶກອົບຮົມການແຕ່ງບົດສອນແບບ OBE ຂອງສາຍຄູມັດທະຍົມ ວັນທີ 14-17 ພຶດສະພາ 2024 ທີ່ສູດ ICT ເມືອງປາກຊັນ ແຂວງບໍລິຄຳໄຊ

❖ **ຂໍ້ຄົງຄ້າງ:** ຍັງມີບາງວຽກທີ່ຕ້ອງໄດ້ສືບຕໍ່ປະຕິບັດ ແລະ ປະຕິບັດແບບຕໍ່ເນື່ອງ

## II. ແຜນວຽກຈຸດສຸມປະຈຳເດືອນ 6/2024

### ກ. ວຽກງານແນວຄິດການເມືອງ, ການຈັດຕັ້ງ ແລະ ນະໂຍບາຍ

1. ສືບຕໍ່ແນວຄິດຫຼັກໝັ້ນ, ເຊື່ອໝັ້ນຕໍ່ການນຳພາຂອງຂອງພັກ
2. ມີຄວາມຮັບຜິດຊອບຕໍ່ໜ້າທີ່ມອບໝາຍໃຫ້ເປັນຢ່າງດີ.
3. ຫ້າວຫັນປະຕິບັດ ແລະ ນັບຖືລະບຽບຂອງພັກ-ລັດ

### ຂ. ວຽກງານວິຊາສະເພາະ

1. ສືບຕໍ່ຂຶ້ນຫ້ອງສອນປົກກະຕິ.
2. ສືບຕໍ່ນຳພານັກສຶກສາອອກແຮງງານໃນເຂດຮອບຜິດຊອບ
3. ສອບເສັງນັກສຶກສາຄູປົກກະຕິ
4. ຮັບຕ້ອນນັກສຶກສາພັກສິ້ນປີຮຽນ
5. ຝຶກອົບຮົມ ການຈັດການຮຽນການສອນ ທີ່ຄຳນຶ່ງເຖິງບົດບາດຍິງຊາຍ ໃຫ້ແກ່ຄູສອນໃນສະຖາບັນສ້າງຄູ
6. ຂຶ້ນແຜນຝຶກອົບຮົມການສອນພາສາອັງກິດໃຫ້ແກ່ຄູສອນໃນວິທະຍາໄລຄູ ດົງຄຳຊ້າງ

## III. ຂໍ້ສະເໜີ

ດັ່ງນັ້ນ, ພາກວິຊາຄູ ພາສາອັງກິດ-ໄອຊີທີ ຈຶ່ງລາຍງານມາຍັງທ່ານເພື່ອຮັບຊາບຕາມທາງຄວນດ້ວຍ.

**ຫົວໜ້າພາກວິຊາຄູ ພາສາອັງກິດ-ໄອຊີທີ** **ຜູ້ສັງລວມ**